


SCIENTIFIC NAME: *Castanopsis tessellata* Hickel & A. Camus

ຊື່ພື້ນບ້ານ: **Cà ổi lá đa; Cả ổi ô vuông; sồi gai; kha thụ rỗ** (Vietnam)

FAMILY: Fagaceae

**Joeri S. Strijk** *(Alliance for Conservation Tree Genomics ACTG)*
**Karina Orozco & Amy Byrne** *(The Morton Arboretum)*

ກິ່ງງ່າ (ຕາກແຫ້ງ) (ຮູບພາບ © *J.S. Strijk, www.asianfagaceae.com*).

## ການກະຈາຍພັນ



**ລາວ, ຫວຽດນາມ, ຢູນານ (ຈີນ).**
ມັກຢູ່ຕາມຮ່ອມພູ ແລະ ປ່າຂ້າງຫ້ອຍນ້ຳ. ລະຫວ່າງ 250–950. ແມັດຈາກລະດັບໜ້າ ນ້ຳທະເລ.

## ສະຖານະພາບຄວາມສ່ຽງ

**VU** **ມີຄວາມສ່ຽງ (Vulnerable).**

## ຄຳອະທິບາຍທາງດ້ານພືດສາດ

**ຕົ້ນໄມ້ໃຫຍ່,** ສູງຕັ້ງແຕ່ 25–30 ແມັດ.

**ກິ່ງງ່າ, ຍອດ ແລະ ໃບອ່ອນ ມີກ້ານຍາວ** ປົກຄຸມດ້ວຍຂົນສີແດງ. ຮອຍແຕກ ສາມາດເຫັນ ໄດ້ເລັກໜ້ອຍເທິງກິ່ງງ່າ. ຕາຍອດ ຮູບໄຂ່, ມີເກັດເປັນວົງຮີ.

**ໃບແກ່ຂ້ອນຂ້າງໜາຽວ**, ປາຍໃບ ແລະ ກົກໃບມັກມີຜາຍຮຽວແຫຼມ, ແຜ່ນໃບ ຍາວໄດ້ເຖິງ 16–20 ຊັງຕີແມັດ ແລະ ກວ້າງ 4.5–6 ຊັງຕີແມັດ, ບໍ່ມີຂົນ ແລະ ເປັນມັນເງົາຫຼາຍດ້ານໜ້າໃບ ແຕ່ຫຼັງໃບມີຂົນສີແດງ ໂດຍສະເພາະເທິງເສັ້ນໃບ ແລະ ບໍລິເວນຂອບ.

ເສັ້ນກາງໃບດ້ານຫຼັງໃບເຫັນໄດ້ຢ່າງຊັດເຈນ, ເສັ້ນໃບດ້ານຂ້າງມີຫຼາຍເຖິງ 16–20 ຄູ່, ດ້ານລຸ່ມຂ້ອນຂ້າງເດັ່ນຊັດ, ເຊື່ອມຕິດກັນຢ່າງຊັດເຈນທາງຂອບ, ເສັ້ນໃບດ້ານລຸ່ມນູນຂຶ້ນ. ຂອບໃບໜ້າຂຶ້ນ ແລະ ໂຄ້ງເລັກໜ້ອຍ. **ກ້ານໃບ** ຍາວແຕ່ 10–25 ມິນລິແມັດ, ບໍ່ມີຂົນເມື່ອແກ່.



**ຊໍ່ດອກຜູ້ຊີງກະບອກຮຽວນ້ອຍ** ບໍ່ເທົ່າກັນ, ເປັນຊໍ່ແບບປາຍຍອດປອມ, ຂ້ອນຂ້າງ ສັ້ນ, ກ່າງມີຂົນສີແດງປົກຄຸມໜາແໜ້ນ. **ດອກຜູ້** ເປັນດອກດ່ຽວ. ໂດຍທົ່ວໄປແບ່ງອອກເປັນ 6 ກີບປາຍປູ້, ມີຂົນອ່ອນໆສີທອງປົກຄຸມ, ກ້ານເກສອນຜູ້ຍາວ.

**ຊໍ່ດອກແມ່ຊີງກະບອກຮຽວນ້ອຍ** ບາງຄັ້ງ ແຍກກັນ, ສ່ວນຫຼາຍມັກ ເປັນກຸ່ມລະ 2 ດອກ ຫຼື ຢູ່ເທິງກິ່ງງ່າດ້ານເທິງ, ບໍ່ຄ່ອຍຮຽງກັນໄປດ້ານຂ້າງ, ກ່າງຊໍ່ເກສອນແມ່ ຂ່ອນຂ້າງ ແຂງແຮງ, ຍາວກວ່າຊໍ່ ດອກເກສອນຜູ້, ມີສີທອງອ່ອນໆ, ມັກໂຄ້ງເລັກໜ້ອຍ. **ດອກແມ່** ມັກຈັບເປັນກຸ່ມ, ກຸ່ມລະ 2 ຫຼື 3 ດອກ, ປົກຄຸມດ້ວຍແຜ່ນສີທອງ, ມີ 3 ກ້ານເກສອນແມ່ ຕໍ່ໜຶ່ງວົງກາບ ແລະ ວົງກີບດອກ, ໂດຍທົ່ວໄປຈະມີ 9 ຕໍ່ໜຶ່ງກາບ ຫຸ້ມໝາກ (ຮູບຖ້ວຍ), ເປັນເສັ້ນຊື່, ຕັ້ງຊື່, ໂຄ້ງມົນທາງເທິງ.

ເພດຍິງ (ສ່ວນລຸ່ມ) ແລະເພດຊາຍ (ສ່ວນເທິງ) ດອກໃນຊໍ່ດອກ (ຮູບ © *H.T. Son*).



**ຊໍ່ໝາກຍາວແຕ່** 20–30 ຊັງຕີແມັດ, ກົກແກນມັກກ້ຽງເລັກໜ້ອຍ ແລະ ບໍ່ມີຂົນ ເມື່ອເວລາແກ່ເຕັມທີ່.

**ກາບຫຸ້ມໝາກ (ຮູບຖ້ວຍ)** ມີຫຼາຍອັນເທິງແກນອັນດຽວກັນ ຮຽງກັນເປັນຊຸດລະ 2–3, ມີເສັ້ນຜ່າສູນກາງ 2.5–4 ຊັງຕີແມັດ, ໂຄ້ງມົນ. ກາບຂ້ອນຂ້າງໜາ, ມີຂົນສີແດງໜາແໜ້ນທັງດ້ານນອກ ແລະ ດ້ານໃນ, ແຕກອອກເປັນ 4 ກີບ, ປົກຄຸມດ້ວຍໜາ ມໜາແໜ້ນ, ຍາວແຕ່ 8–9 ມິນລີແມັດ, ເປັນຮູບດາບ, ເຊື່ອມຕິດກັນແຕ່ສະເພາະຢູ່ຖານໂຄນກີບ ແລະ ປົກຄູມດ້ວຍຂົນແປໆ. ດ້ານເທິງກ້ຽງ. **ໝາກ** 2–3 ແກ່ນຕໍ່ຖ້ວຍ, ຍາວແຕ່ 15 ມິນລີແມັດ ແລະ ກວ້າງ 15–19 ມິນລີແມັດ, ມີຂົນແປສີແດງອ່ອນໆ.

ໝາກທີ່ແກ່ (ຕາກແຫ້ງ), ສະແດງໃຫ້ເຫັນວາວ ແລະ ການເສື່ອມໂຊມ (ຮູບພາບ© *J.S. Strijk, www.asianfagaceae.com*).



ໝາກໄມ້ທີ່ແກ່ (ສົດ) ສະແດງຈອກປິດ ແລະ ຕໍາແໜ່ງເທິງງ່າ (ຮູບ © *H.T. Son*).

## ຄໍາແນະນໍາໃນການເກັບໝາກ (ແກ່ນ) ສໍາລັບກ້າແນວພັນໃນເຮືອນຫົ່ມ

ເມື່ອໝາກແກ່, ໃຫ້ເກັບແກ່ນໂດຍກົງຈາກຕົ້ນ ໂດຍການສັ່ນງ່າ ຫຼື ແມ້ນໂດຍໄມ້ສ້າວ. ເນື່ອງຈາກອັດຕາການຫງອກຂອງແກ່ນແມ່ນຈະ ຫຼຸດລົງໄວຫຼັງຈາກທີ່ຕົກລົງພື້ນດິນ ແລະ ມີຄວາມສ່ຽງທີ່ຈະຖືກທໍາລາຍໂດຍສັດ ແລະ ແມງໄມ້ ດັ່ງນັ້ນຄວນເກັບໂດຍກົງຈາກຕົ້ນດີກວ່າ ເກັບຈາກພື້ນດິນ. ຖ້າແກ່ນບໍ່ມີຫຼາຍ, ກໍ່ສາມາດນໍາເອົາຊໍ່ໝາກ ແລະ ແກ່ນທີ່ຕົກຕາມພື້ນດິນມາໃຊ້ຂະຫຍາຍພັນຢູ່ເຮືອນຫົ່ມໄດ້.

ບໍ່ຄວນ ປອກເປືອກໜາມ ຂອງໝາກ ແລະ ຊໍ່ໝາກ (ບໍ່ເອົາສ່ວນທີ່ມີໜາມກາບຫຸ້ມໝາກ(ຮູບຖ້ວຍ)ອອກເພື່ອໃຫ້ເຫັນແກ່ນທາງໃນ). ການປອກ ເປືອກເພື່ອໃຫ້ເຫັນແກ່ນທາງໃນຈະເຮັດໃຫ້ມີຄວາມສ່ຽງຕໍ່ການຖືກທໍາລາຍຈາກແມງໄມ້ ແລະ ແຫ້ງໃນລະຫວ່າງການຂົນສົ່ງ, ແລະ ການ ເກັບຮັກສາ, ແລະ ເຮັດໃຫ້ການລະບຸຈັດຈໍາແນກແນວພັນມີຄວາມຍຸ້ງຍາກ. ບໍ່ຄວນ ປອກເປືອກ ຊໍ່ໝາກເພື່ອແຍກໝາກອອກມາ ເປັນແຕ່ລະ ໝາກ. ກຸ່ມ ຂອງຕົ້ນກໍ່ຊະນິດນີ້, ຈະອອກໝາກໃກ້ໆກັນ ສາມາດເກັບຕົວຢ່າງແກ່ນແນວພັນເປັນ ປະຊາກອນທ້ອງຖິ່ນ ແລະ ສາມາດເກັບຮອບຮອມໃນຖົງອັນດຽວກັນໄດ້. ແກ່ນທີ່ເກັບຈາກຕົ້ນທີ່ຫ່າງກັນການ 100–150 ເມັດ ບໍ່ຄວນນໍາມາປົນກັນ, ຕ້ອງແຍກ ເກັບໃນຖົງທີ່ຕ່າງກັນ. ຫາກມີຄວາມເປັນໄປໄດ້ ຄວນເກັບກໍາຂໍ້ມູນທາງດ້ານພູມສາດ ສໍາລັບ ປະຊາກອນທ້ອງຖິ່ນ ແລະ ແຕ່ລະຖົງ ທີ່ເກັບຈາກປະຊາກອນເຫຼົ່ານັ້ນຈະຕ້ອງລະບຸຂໍ້ມູນລະອຽດເຊັ່ນດຽວກັນ. ການເກັບກິ່ງກ້ານນ້ອຍໆ ແລະ ໃບຈາກຕົ້ນທີ່ເກັບໝາກໃສ່ໃນ ຖົງທີ່ເກັບຕົວຢ່າງນໍາຍິ່ງເປັນການດີ ເພື່ອຊ່ວຍໃນການລະບຸຊະນິດ.

## ການອອກດອກ-ໝາກ

**ອອກດອກເດືອນ:**
ພຶດສະພາ-ມິຖຸນາ.

**ໝາກ:**
ເດືອນ ສິງຫາ-ທັນວາ?

**ການຂະຫຍາຍພັນ:**
ໂດຍສັດກັດແທະ
(ກະຫອກ, ໜູ, ໜູນ້ອຍ?).

**ຄວາມຕ້ອງການແສງ ຫຼື ຂໍ້ມູນທາງລະບົບນິເວດວິທະຍາ:**
ຍັງຕ້ອງສຶກສາຢັ້ງຢືນ.

## ການນໍາໃຊ້

ໝາກກິນໄດ້.

*ຂໍ້ຄວາມນີ້ເປັນຂອງຜູ້ຂຽນ.ການແຜ່ພັນບາງສ່ວນ ຫຼືທັງໝົດຂອງວຽກງານນີ້, ແລະການແປຂອງມັນຖືກຫ້າມໂດຍບໍ່ໄດ້ຮັບອະນຸຍາດຈາກສະຖາບັນການພິມເຜີຍແຜ່.*

**ຂໍ້ມູນອອນລາຍ:**
https://www.asianfagaceae.com/castanopsis/Castanopsis_tessellata/